# ປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທຂອງປະຊາຊົນໃນເຂດຊົນນະບົດ ເມືອງ ໂພນທອງ ແຂວງ ຈຳປາສັກ

**ສະຫຼອງໄຊ ຟອງສະໝຸດ[1], ປອ ບຸນຖົມ ສີສຸມັງ[2], ຫຸມເພັງ ມູນໂພໄຊ[3], ໂສວັດ ຄຳພູວັນ[4]**

*ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ ສປປ ລາວ*

**ບົດຄັດຫຍໍ້**

ການຄົ້ນຄວ້າວິໄຈນີ້ມີຈຸດປະສົງເພື່ອສຶກສາ 2 ຈຸດປະສົງຄື: ເພື່ອສຶກສາປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທ ແລະ ສຶກສາເຖິງຜົນກະທົບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທ ຕໍ່ເສດຖະກິດຄົວເຮືອນຂອງປະຊາຊົນໃນເຂດຊົນນະບົດ ເມືອງ ໂພນທອງ ແຂວງ ຈຳປາສັກ ເຊິ່ງການສຶກສາດັ່ງກ່າວແມ່ນຈະນຳໃຊ້ຂໍ້ມູນປະຖົມພູມທີ່ໄດ້ຈາກການລົງສຳພາດຂໍ້ມູນກັບຄົວເຮືອນຂອງປະຊາຊົນໃນ ເມືອງ ໂພນທອງ ແຂວງ ຈຳປາສັກ ໂດຍສະເພາະແມ່ນຄົວເຮືອນຂອງປະຊາຊົນໃນ 5 ບ້ານທີ່ມີແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທຫຼາຍກວ່າໝູ່ຄື: ບ້ານຂະໜາດ, ສັກເມືອງບ້ານ ,ສະໜັນ, ຊົ້ງຊາຍ ແລະ ພະລົງ ຈຳນວນ 336 ຄົນເຮືອນ, ສຳລັບການທົດສອບກ່ຽວກັບປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ແມ່ນນຳໃຊ້ Logit Model ເຂົ້າໃນການຄາດປະມານ, ສ່ວນການວິເຄາະຜົນກະທົບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ຕໍ່ເສດຖະກິດຄົວເຮືອນຂອງປະຊາຊົນ ແມ່ນນຳໃຊ້ສົມຜົນການຖົດຖອຍແບບພະຫຸຄູນ (Multiple-regression Model) ທີ່ຄາດປະມານດ້ວຍວິທີກຳລັງສອງນ້ອຍສຸດ (Ordinary Least Squares: OLS) ເຊິ່ງພິຈາລະນາໃນແງ່ຂອງລາຍໄດ້, ລາຍຈ່າຍ ແລະ ຊັບສິນຂອງຄົວເຮືອນ.

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈທີ່ມີຜົນທາງບວກເຮັດໃຫ້ປະຊາຊາຊົນໃນເຂດພື້ນທີ່ດັ່ງກ່າວມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ໄດ້ແກ່: ປັດໄຈດ້ານເພດຂອງຫົວໜ້າຄົວເຮືອນ, ກຳລັງແຮງງານທັງໝົດໃນຄົວເຮືອນ, ການມີເສັ້ນທາງເຂົ້າເຖິງ ແລະ ການມີໜີ້ສິນໃນຄົວເຮືອນ, ໃນຂະນະດຽວກັນປັດໄຈທີ່ມີຜົນໃນທິດທາງກົງກັນຂ້າມກັບ ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ໄດ້ແກ່: ເນື້ອທີ່ການຜະລິດກະສິກຳ, ປະສິດທິພາບການຜະລິດ, ການມີລະບົບຊົນລະປະທານເຂົ້າເຖິງ ແລະ ການຊອກຫາວຽກເຮັດງານທຳໄດ້ໃນທ້ອງຖິ່ນ ເຊິ່ງສະທ້ອນໃຫ້ເຫັນເຖິງແຮງຜັກດັນພາຍນອກທີ່ເຮັດໃຫ້ມີການເຄື່ອນຍ້າຍແຮງງານອອກນອກປະເທດ. ສ່ວນການວິເຄາະກ່ຽວກັບຜົນກະທົບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທຕໍ່ກັບເສດຖະກິດຂອງຄົວເຮືອນ ພົບວ່າ ຄົວເຮືອນທີ່ມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ປະເທດໄທມີລາຍໄດ້, ລາຍຈ່າຍ ແລະ ຊັບສິນຄົວເຮືອນສູງກວ່າຄົວເຮືອນທີ່ບໍ່ມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ປະເທດໄທເຖິງ 23.78 % ,  20.77 % ແລະ 21.26 % ຕາມລຳດັບ, ລາຍຮັບສະເລ່ຍຕໍ່ຫົວຄົນຈາກການເຮັດວຽກ ແລະ ສົ່ງມາໃຫ້ຄອບຄົວໃນແຕ່ລະປີແມ່ນ 18,040.90 ບາດຕໍ່ຄົນ, ເຊິ່ງສາມາດຊ່ວຍປັບປຸງຄຸນນະພາບຊີວິດຂອງຄອບຄົວໃຫ້ດີຂຶ້ນໄດ້ຢ່າງຊັດເຈນ.

***ຄຳສັບທີ່ສຳຄັນ***: *ການເຄື່ອນຍ້າຍແຮງງານ, ເສດຖະກິດຄົວເຮືອນ, Logit model*

---

[1] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ໂທ +8562059459636, email: salongsxay@cu.edu.la*

[2] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ: sbounthom@yahoo.com*

[3] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ: houmpheng1982@gmail.com*

[4] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ: Sovat@cu.edu.com*

# Factors affecting the labor migration to work in Thailand of people in the rural areas of Phonthong District, Champasak Province

**Salongxay Fongsamouth[1], Bounthom SISOUMANG[2], Houmpheng MOONPHOXAY[3], Sovat KHAMPHOUVAN[4]**

*The Faculty of Economics and Management, Champasak University, Laos*

## Abstract

This research aims to study 2 objectives: factors that influence labor migration to Thailand and the effects of labor migration on the household economies of people living in rural areas in Phonthong District, Champasak Province. The primary data for this study was obtained from household interviews conducted in five villages where a greater number of workers migrate to work in the Kingdom of Thailand, like Khanat village, Sackmaung village, Samanh village, Xongxay village, and Phaling village, are 336 households. The Logit Model was used to determine the factors influencing labor migration to Thailand. Regarding the examination of the effects of labor migration to Thailand on people' household economies; considering income, expenses, and household property through the use of a multiple-regression model that was also evaluated using the Ordinary Least Squares (OLS) method.

The research findings show that the gender of the household head, the amount of labor in the home, having access to routes, and household debt are factors that positively affect the increasing number of people migrating to Thailand to find jobs. At the same time, the factors that have a negative effect on the decreasing number of migrations of workers to work in Thailand are: agricultural production area, production efficiency, access to irrigation systems, and the ability to find jobs locally, which reflect the external pressure that causes the migration of labor outside the country. According to an analysis of the effects of labor migration to Thailand on household economies, households with household members employed there have higher incomes, expenses, and household property than households without household members employed there, by 23.78%, 20.77%, and 21.26%, respectively. The average amount of money earned from working and bringing home to the family each year is 18,040.90 baht per person, which can significantly improve the quality of life in the household.

***Keywords***: Labor migration , Household economics, Logit Model

[1] The Faculty of Economics and Management, Champasak University, Tel +8562059459636 email: salongsxay@cu.edu.la

[2] Faculty of Economics and Management, Email: sbounthom@yahoo.com

[3] Faculty of Economics and Management, email: *houmpheng1982@gmail.com*

[4] Faculty of Economics and Management, Email: *Sovat@cu.edu.com*

## 1. ພາກສະເໜີ

ລາຊະອານາຈັກໄທຖືເປັນສູນກາງການຍ້າຍຖິ່ນຂອງແຮງງານຂ້າມຊາດທີ່ສຳຄັນໃນພູມິພາກອາຊີຕາເວັນອອກສ່ຽງໃຕ້ ເປັນທັງປະເທດທີ່ມີການເຄື່ອນຍ້າຍແຮງງານອອກນອກປະເທດ ແລະ ແຫຼ່ງຮອງຮັບແຮງງານຈາກປະເທດອື່ນ ເນື່ອງຈາກຄວາມຕ້ອງການນຳໃຊ້ແຮງງານພາຍໃນປະເທດທີ່ເພີ່ມຂຶ້ນ ໂດຍສະເພາະແຮງງານທີ່ເຮັດວຽກໃນລະດັບພື້ນຖານທີ່ແຮງງານຈາກປະເທດໄທເອງບໍ່ສາມາດເຕີມເຕັມໄດ້ ເຮັດໃຫ້ມີຊ່ອງຫວ່າງສຳລັບແຮງງຕ່າງດ້າວເຂົ້າໄປແທນທີ່ ໂດຍແຮງງານຕ່າງດ້າວທີເຮັດວຽກຢູ່ປະເທດໄທຫຼາຍກວ່າໝູ່ແມ່ນແຮງງານຈາກປະເທດມຽນມາ (1,978,348 ຄົນ), ຮອງລົງມາແມ່ນແຮງງານຈາກ ສປປ ລາວ (969,267 ຄົນ) ແລະ ກຳປູເຈຍ (805, 272 ຄົນ) ເຊິ່ງກວມເອົາເຖິງ 54% ຂອງການເຄື່ອນຍ້າຍແຮງງານທັງໝົດໃນອາຊຽນ (Word bank, 2018) ແຕ່ເມື່ອພິຈາລະນາຈາກຈຳນວນຂອງປະຊາກອນພາຍໃນປະເທດແລ້ວ ເຫັນວ່າ ສປປ ລາວມີສັດສ່ວນການເຄື່ອນຍ້າຍແຮງງານສູງທີ່ສຸດໃນອາຊຽນ ຄິດເປັນປະມານ 13.67% ຂອງຈຳນວນປະຊາກອນທັງໝົດ ເຊິ່ງສອດຄ່ອງກັບການປະເມີນຂອງສະຫາປະຊາຊາດທີ່ຄາດຄະເນວ່າມີຄົນລາວປະມານ 1.35 ລ້ານຄົນອາໄສຢູ່ຕ່າງປະເທດ ເຊິ່ງສ່ວນໃຫຍ່ແມ່ນການຍ້າຍຖິ່ນເພື່ອການຈ້າງງານ (UNDESA 2020), ຈຳປາສັກເປັນແຂວງໜຶ່ງທີ່ມີແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ລາຊະອານາຈັກໄທຫຼາຍເປັນອັນດັບຕົ້ນໆຂອງປະເທດ ໃນປີ 2022 ມີແຮງງານໄປເຮັດວຽກຢູ່ປະເທດໄທ ເຖິງ 54,695 ຄົນ, ໃນນັ້ນ ເມືອງທີ່ມີແຮງງານເຄື່ອນຍ້າຍໄປປະເທດຫຼາຍກວ່າໝູ່ແມ່ນ ເມືອງໂພນທອງ ມີແຮງງານເຄື່ອນຍ້າຍໄປລາຊະອານາຈັກໄທເຖິງ 11,218 ຄົນ.(ພະແນກແຮງງານ ແລະ ສະຫັວດດີການສັງຄົມ ແຂວງ ຈຳປາສັກ ,2020).

ບັນຫາການເຄື່ອນຍ້າຍແຮງງານຍັງເປັນບັນຫາທີ່ພົ້ນເດັ່ນໃນຫຼາຍປະເທດ ຜ່ານມາມີນັກວິໄຈຫຼາຍທ່ານທີ່ໄດ້ຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍແຮງງານໃນຫຼາຍປະເທດ ເຊັ່ນ: ການຄົ້ນຄວ້າຂອງ Yormirzoev ໃນປີ 2017 ທີ່ໄດ້ສຶກສາກ່ຽວກັບປັດໄຈທີ່ເປັນຕົວກຳນົດການເຄື່ອນຍ້າຍແຮງງານຈາກປະເທດທາຈິກິສສະຖານເຂົ້າສູ່ປະເທດລັດເຊຍ , ສີລິລັດ ສຸກັນທາ ໃນປີ 2014 ທີ່ໄດ້ຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍແຮງງານຂ້າມຊາດສັນຊາດພະມ້າ ໃນເຂດພາກເໜືອ ຂອງປະເທດໄທ, Hanif, Islam and Ahmed ໃນປີ 2020 ທີ່ໄດ້ຄົ້ນຄວ້າກ່ຽວກັບປັດໄຈທີ່ມີຜົນຕໍ່ການເຄື່ອງຍ້າຍແຮງງານໃນພາກກະສິກຳຈາກຊົນນະບົດສູ່ຕົວເມືອງ ແລະ ທ່ານອື່ນໆອີກຫຼາຍທ່ານ ໂດຍເຫັນວ່າຜົນການຄົ້ນຄວ້າແມ່ນມີຫຼາຍປະເດັນທີ່ແຕກຕ່າງກັນອອກໄປ ເຊິ່ງຂຶ້ນກັບສະພາບເງື່ອນໄຂ ແລະ ຈຸດພິເສດຂອງແຕ່ລະປະເທດ. ສຳລັບການຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍແຮງງານຂ້າມຊາດຢູ່ ສປປ ລາວໃນໄລຍະຜ່ານມາແມ່ນມີນັກວິໄຈຈຳນວນໜຶ່ງທີ່ໄດ້ເຮັດການຄົ້ນຄວ້າ ເປັນຕົ້ນແມ່ນ: ງານວິໄຈຂອງທ່ານ Aree Jampaklay and Sirinan Kittisuksathit ທີ່ໄດ້ເຮັດການຄົ້ນຄວ້າໃນປີ 2015 ທີ່ໄດ້ຄົ້ນຄວ້າເຖິງການສົ່ງເງິນກັບບ້ານຂອງແຮງງານເຄື່ອນຍ້າຍຊາວກຳປູເຈຍ, ລາວ ແລະ ພະມ້າ, ການສຶກສາຂອງ International Organization for Migration ໃນປີ 2021 ໄດ້ຄົ້ນຄວ້າເຖິງທ່າອ່ຽງການເຄື່ອນຍ້າຍແຮງງານໃນ ສປປ ລາວ, Vongpaphane Manivong, Rob Cramb and Jonathan Newby ໃນປີ 2014 ໄດ້ຄົ້ນຄວ້າເຖິງການສົ່ງເງິນກັບບ້ານກັບການເພີ່ມປະລິມານຜົນຜະລິດເຂົ້າ ແລະ

ຜົນຜະລິດທາງການກະເສດໃນພາກໃຕ້ຂອງ ສປປ ລາວ ແລະ ສີທາ ເຂັມມະລາດ ໃນປີ 2021 ໄດ້ຄົ້ນຄວ້າກ່ຽວກັບຜົນກະທົບຂອງ COVID-19 ຕໍ່ການເຄື່ອນຍ້າຍແຮງງານລາວ, ກໍລະນີສຶກສາ ແຮງງານແຂວງ ສະຫວັນນະເຂດ ເຄື່ອນຍ້າຍມາຈາກລາຊະອານາຈັກໄທ ເຊິ່ງຈະເຫັນໄດ້ວ່າການຄົ້ນຄວ້າສ່ວນໃຫຍ່ໃນໄລຍະຜ່ານມາແມ່ນເນັ້ນໃສ່ສຶກສາກ່ຽວກັບພຶດຕິກຳການເຄື່ອນຍ້າຍແຮງງານ, ການສົ່ງເງິນກັບບ້ານ, ການຜະລິດກະສິກຳ ແລະ ຮູບແບບການເຄື່ອນຍ້າຍແຮງງານເປັນຫຼັກ ເຊິ່ງເຫັນວ່າຍັງມີລັກສະນະຈຳກັດ ໂດຍສະເພາະດ້ານພື້ນທີ່ການສຶກສາ, ການນຳໃຊ້ຕົວປ່ຽນ ແລະ ການເຄື່ອງມືທາງສະຖິຕິ.

ອີກບັນຫາໜຶ່ງທີ່ເປັນປະເດັນທີ່ໜ້າສົນໃຈກໍ່ຄື ກຸ່ມ 7 ເມືອງ ໂພນທອງ ແຂວງ ຈຳປາສັກ ຖືເປັນທ້ອງຖິ່ນໜຶ່ງທີ່ມີຄວາມອຸດົມສົມບູນທາງດ້ານເນື້ອທີ່ການຜະລິດກະສິກຳ, ຫຼາຍບ້ານມີຊົນລະປະທານເຂົ້າເຖິງ, ມີເສັ້ນທາງທີ່ສະດວກສະບາຍ, ມີໄຟຟ້າໃຊ້, ຢູ່ຕິດກັບແຄມແມ່ນໍ້າຂອງ ແລະ ຍັງມີເງື່ອນໄຂຄວາມພ້ອມອີກຫຼາຍຢ່າງ ແຕ່ວ່າ ປະຊາຊົນໃນບ້ານດັ່ງກ່າວກໍ່ຍັງມີການເຄື່ອນຍ້າຍແຮງງານອອກຈາກພື້ນທີ່ຈຳນວນຫຼາຍ ເຮັດໃຫ້ປະຈຸບັນນີ້ພາຍໃນບ້ານແມ່ນກຳລັງປະເຊີນກັບບັນຫາການຂາດແຄນແຮງງານໃນພາກການຜະລິດກະສິກຳ ແລະ ໄວໜຸ່ມທີ່ຈະມາເຄື່ອນໄຫວວຽກງານການພັດທະນາເສດຖະກິດ-ສັງຄົມພາຍໃນບ້ານ ເຊິ່ງມັນກາຍເປັນບັນຫາທີ່ຫຼາຍຄົນໃຫ້ຄວາມກັງວົນ ດັ່ງນັ້ນ, ການສຶກສາຄັ້ງນີ້ຈຶ່ງມີຄວາມສົນໃຈຢາກສຶກສາເຖິງ ປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ ລາຊະອານາຈັກໄທ ຂອງປະຊາຊົນ ໃນເຂດຊົນນະບົດ ເມືອງ ໂພນທອງ ແຂວງ ຈຳປາສັກ ເພື່ອຄົ້ນຫາຄຳຕອບຂອງບັນຫາ ແລະ ເປັນຂໍ້ມູນທາງດ້ານວິຊາການໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ແລະ ຊອກຫາແນວທາງໃນການແກ້ໄຂບັນຫາໃນອະນາຄົດ

## 2. ຈຸດປະສົງ

2.1 ເພື່ອສຶກສາເຖິງປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທຂອງປະຊາ ຊົນໃນເຂດຊົນນະບົດ ເມືອງ ໂພນທອງ ແຂວງ ຈຳປາສັກ

2.2 ເພື່ອສຶກສາເຖິງຜົນກະທົບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທ ຕໍ່ເສດຖະກິດຄົວເຮືອນຂອງປະຊາຊົນ ໃນເຂດຊົນນະບົດ ເມືອງ ໂພນທອງ ແຂວງ ຈຳປາສັກ

## 2. ວິທີການຄົ້ນຄວ້າ

ການສຶກສານີ້ແມ່ນນຳໃຊ້ຂໍ້ມູນປະຖົມພູມ ທີ່ໄດ້ນຳໃຊ້ແບບສອບຖາມເປັນເຄື່ອງມືໃນການລົງສຳຫຼວດຂໍ້ມູນກັບຄົວເຮືອນຂອງປະຊາຊົນໃນບ້ານທີ່ມີແຮງງານໄປເຮັດວຽກຢູ່ໄທຫຼາຍກວ່າໝູ່ ໂດຍສະເພາະຄົວເຮືອນຂອງປະຊາຊົນໃນ 5 ບ້ານ ຄື: ບ້ານຂະໜາດ ,ສັກເມືອງ, ສະໜັນ, ຊົ້ງຊາຍ ແລະ ບ້ານພະລົງ. ການຄັດເລືອກກຸ່ມເປົ້າໝາຍໃນການສຶກສາແມ່ນນຳໃຊ້ວິທີການສຸ່ມຕົວຢ່າງແບບຫຼາຍຂັ້ນຕອນ ) Multi-stage sampling method) ເຊິ່ງມີຈຳນວນປະຊາກອນທັງໝົດ 2,083 ຄົວເຮືອນ ແລະ ກຸ່ມຕົວຢ່າງທັງໝົດ 336 ຕົວຢ່າງ ,ໃນນັ້ນມີຄົວເຮືອນທີ່ບໍ່ມີສະມາຊິກໄປເຮັດວຽກຢູ່ປະເທດໄທ ຈຳນວນ 219 ແລະ ຄົວເຮືອນທີ່ມີສະມາຊິກໄປເຮັດວຽກຢູ່ປະເທດໄທ ຈຳນວນ 117 ຄົວເຮືອນ. ການທົດສອບປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ຂອງ

ປະຊາຊົນ ໃນເຂດຊົນນະບົດ ເມືອງ ໂພນທອງ ແຂວງ ຈຳປາສັກແມ່ນນຳໃຊ້ແບບຈຳລອງ Logit Model ທີ່ຄາດປະມານດ້ວຍວິທີ Maximum likelihood ແລະ ການຄຳນວນຫາຄ່າ Marginal effect ເພື່ອອະທິບາຍຂະໜາດຜົນກະທົບຕໍ່ໜ່ວຍຂອງການພົວພັນລະຫວ່າງຕົວປ່ຽນອິດສະຫຼະ ແລະ ຕົວປ່ຽນຕາມທີ່ໃຊ້ໃນແບບຈຳລອງ ແຕ່ເນື່ອງຈາກແບບຈຳລອງ Logit Model ເຊິ່ງເປັນແບບຈຳລອງທີ່ຕົວປ່ຽນຕາມເປັນຕົວປ່ຽນຫຸ່ນທີ່ມີສອງຄ່າຄື: 1 ກັບ 0 .ດັ່ງນັ້ນ, ການຄາດປະມານໃນແບບຈຳລອງຈຶ່ງຈຳເປັນຕ້ອງມີການກວດສອບ ແລະ ແກ້ໄຂບັນຫາທາງເສດຖະມິຕິ ໂດຍສະເພາະແມ່ນບັນຫາພະຫຸສຳພັນ )Multicollinearity) ເພື່ອຫຼີກລຽງການເກີດບັນຫາທາງເສດຖະມິຕິ.

ສຳລັບແບບຈຳລອງທີ່ໃຊ້ໃນການທົດສອບຜົນໃຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານແມ່ນນຳໃຊ້ແບບຈຳລອງດັ່ງນີ້:

$$Ln\left(\frac{Pr(DTH=1)}{Pr(DTH=0)}\right)_{ij}=\beta_0+\beta_1(HC_{ij})+\beta_2(EF_{ij})+\beta_3(QF_{ij})+u_{ij}$$

ເຊິ່ງວ່າ DTH ແມ່ນໝາຍເຖິງການມີສະມາຊິກໃນຄົວເຮືອນເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທເຊິ່ງໃນການສຶກສາຄັ້ງນີ້ກຳນົດໃຫ້ , ) ເປັນຕົວປ່ຽນຕາມ ເປັນຕົວປ່ຽນຫຸ່ນDummy variables) ທີ່ມີສອງຄ່າຄື .0 ແລະ 1ໃນນັ້ນ ຄົວເຮືອນທີ່ມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ປະເທດໄທແມ່ນເທົ່າກັບ ແລະ ອື່ນໆ 1 .0 ແມ່ນເທົ່າກັບ$HC_{ij}$ ແມ່ນແທນໃຫ້ລັກສະນະຂອງຄົວເຮືອນທີ i ຢູ່ໃນບ້ານທີ j, $EF_{ij}$ ແມ່ນແທນໃຫ້ປັດໄຈດ້ານເສດຖະກິດຂອງຄົວເຮືອນທີ i ຢູ່ໃນບ້ານທີ j ແລະ $SF_{ij}$ ແມ່ນແທນໃຫ້ປັດໄຈສະໜັບສະໜູນຂອງຄົວເຮືອນທີ i ຢູ່ໃນບ້ານທີ j, $\beta_0$ ແມ່ນຄ່າສາປະສິດຂອງຕົວປ່ຽນອິດສະຫຼະ (Intercept). $\beta_1$,$\beta_2$,$\beta_3$ແມ່ນຄ່າຄວາມຊັນຂອງຕົວປ່ຽນອິດສະຫຼະແຕ່ລະຕົວ (Slopes). ແລະ $u$ ແມ່ນຄ່າຄາດເຄື່ອນ ເຊິ່ງ $i = 1,2,3,\dots,n$ ແລະ $j = 1,2,3,\dots\dots,n$.

ສຳລັບການວິເຄາະຜົນກະທົບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ຕໍ່ເສດຖະກິດຄົວເຮືອນຂອງປະຊາຊົນ ແມ່ນນຳໃຊ້ສົມຜົນການຖົດຖອຍແບບພະຫຸຄູນ (Multiple-regression Model) ທີ່ຄາດປະມານດ້ວຍວິທີກຳລັງສອງນ້ອຍສຸດ (Ordinary Least Squares: OLS) ເຊິ່ງພິຈາລະນາໃນແງ່ຂອງລາຍໄດ້, ລາຍຈ່າຍ ແລະ ຊັບສິນຂອງຄົວເຮືອນ.

$$LnY_{ij} = \alpha + \beta_{ij}TF_{ij} + \varepsilon_{ij}HC_{ij} + EF_{ij} + u_{ij}$$

ເຊິ່ງວ່າ $Y_i$ ແມ່ນເສດຖະກິດຂອງຄົວເຮືອນສຳລັບໃນການສຶກສາຄັ້ງນີ້ແມ່ນວັດຈາກລາຍໄດ້, *ລາຍຈ່າຍ ແລະ ຊັບສິນ*ຂອງຄົວເຮືອນ ,ເຊິ່ງວ່າຫົວໜ່ວຍທີ່ໃຊ້ໃນການວັດ*ແທກ*ແມ່ນເປັນກີບ ,$TF_{ij}$ ແມ່ນປັດໄຈ*ດ້ານການໄປເຮັດວຽກຢູ່ປະເທດໄທ*, $HC_{ij}$ ແມ່ນປັດໄຈ*ດ້ານລັກສະນະຂອງຄົວເຮືອນ ແລະ* .$EF_{ij}$ ແມ່ນປັດໄຈດ້ານ*ເສດຖະກິດທີ່ປະກອບດ້ວຍແຕ່ລະປັດໄຈຍ່ອຍ* ເນື່ອງຈາກວ່າ ຕົວປ່ຽນຕາມທີ່ຈະໃຊ້ເຂົ້າໃນການວິເຄາະເປັນຕົວປ່ຽນແບບປະລິມານສຳລັບການຄາດປະມານໃນແບບຈຳລອງ (Model) ແມ່ນນຳໃຊ້ຂໍ້ມູນໄຂ່ວ (cross section data( ເຂົ້າໃນການສຶກສາ ໂດຍສ່ວນໃຫຍ່*ແລ້ວ*ມັກຈະພົບບັນຫາທາງເສດຖາມິຕິ ເປັນຕົ້ນແມ່ນບັນຫາ : Multicollinearity ແລະ Heteroskdasticity ຫຼື ເວົ້າອີກຢ່າງໜຶ່ງວ່າບັນຫາຕົວປ່ຽນອິດສະຫຼະມີຄວາມສຳພັນກັນ (Corr $(\mu_t,\mu_s|x| \neq 0, t \neq s)$ ເຊິ່ງຖ້າເກີດບັນຫາດັ່ງກ່າວ ຈະເຮັດໃຫ້ຂະໜາດ ແລະ ເຄື່ອງໝາຍຂອງຄ່າສຳປະສິດ*ບໍ່ມີປະສິດທິພາບ* ສິ່ງຜົນເຮັດໃຫ້ຜົນການຄາດປະມານບິດເບືອນບໍ່ຖືກຕ້ອງຕາມຄວາມຈິງ ດັ່ງນັ້ນ, ໃນການສຶກສາໃນຄັ້ງນີ້ *ໄດ້*ມີການກວດສອບ *ແລະ ແກ້ໄຂບັນຫາທາງເສດຖະມິຕິເຫຼົ່ານີ້ກ່ອນ.*

**3. ຜົນໄດ້ຮັບ**

ຜົນການສໍາພາດຂໍ້ມູນຕົວຈິງກັບກຸ່ມຕົວຢ່າງ ພົບວ່າ ໂດຍລວມແລ້ວໃນເຂດພື້ນທີ່ການສຶກສາມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ລາຊະອານາຈັກໄທສະເລ່ຍຢູ່ທີ່ 2.71 ຄົນ/ຄົວເຮືອນ ເຊິ່ງແຮງງານທີ່ໄປໄທສ່ວນໃຫຍ່ແມ່ນເປັນເພດຍິງ ກວມເອົາ 53.40 ສ່ວນຮ້ອຍ ມີອາຍຸສະເລ່ຍຕອນທີ່ໄປປະເທດໄທທໍາອິດປະມານ 21.80 ປີ, ໃນນັ້ນ, ມີເຖິງ 12.96 ສ່ວນຮ້ອຍທີ່ມີອາຍຸຕໍ່າກວ່າ 18 ປີລົງມາ ໂດຍແຮງງານທີ່ໄປເຮັດວຽກຢູ່ປະເທດໄທສ່ວນໃຫຍ່ແມ່ນເປັນແຮງງານດິບທີ່ມີລະດັບການສຶກສາພຽງແຕ່ລະດັບສາມັນ ກວມເອົາເຖິງ 68.48 ສ່ວນຮ້ອຍ ໂດຍສະເພາະແມ່ນຈົບຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ, ໃນນັ້ນມີ 15.43 ສ່ວນຮ້ອຍທີ່ຮຽນບໍ່ຈົບຊັ້ນປະຖົມ, ເຊິ່ງຜູ້ທີ່ໄປໄທສ່ວນໃຫຍ່ແມ່ນມີພື້ນຖານຄອບຄົວປະກອບອາຊີບກະສິກໍາເປັນຫຼັກ ໂດຍສະເພາະແມ່ນອາຊີບເຮັດນາ ແລະ ເຮັດສວນ ກວມເອົາເຖິງ 65.74 ສ່ວນຮ້ອຍ, ຮອງລົງມາແມ່ນອາຊີບກໍາມະກອນ ແລະ ພະນັກງານເອກະຊົນ ກວມເອົາ 28.40 ສ່ວນຮ້ອຍ, ເຊິ່ງແຮງງານເຫຼົ່ານີ້ແມ່ນໄປເຮັດວຽກຢູ່ປະເທດໄທສະເລ່ຍແລ້ວເປັນເວລາ 5.78 ປີ, ໂດຍປະເພດວຽກທີ່ແຮງງານລາວໄປເຮັດຢູ່ປະເທດໄທຫຼາຍກວ່າໝູ່ແມ່ນຢູ່ໃນຂະແໜງບໍລິການ ເຊັ່ນ: ພະນັກງານເຮັດວຽກຕາມຫ້າງສັບພະສິນຄ້າ, ຮ້ານອາຫານ, ຮ້ານກິນດື່ມ, ສະຖານບັນເທີງ, ໂຮງແຮມ, ສະປາ, ພະນັກງານຮັກສາຄວາມສະອາດ ແລະ ອື່ນໆ ກວມເອົາເຖິງ 44.45 ສ່ວນຮ້ອຍ, ຮອງລົງມາແມ່ນເປັນພະນັກງານໃນໂຮງງານອຸດສະຫະກໍາ ແລະ ຂະແໜງກະສິກໍາ. ນອກຈາກນີ້ຜົນການສໍາຫຼວດຂໍ້ມູນພື້ນຖານຍັງພົບວ່າ ກ່ອນທີ່ຍັງບໍ່ທັນມີການໄປເຮັດວຽກຢູ່ປະເທດໄທ ເຂົາເຈົ້າມີລາຍໄດ້ສະເລ່ຍຢູ່ທີ່ 766,585.93 ກີບ/ເດືອນ ແຕ່ພາຍຫຼັງທີ່ໄປເຮັດວຽກຢູ່ປະເທດໄທແລ້ວເຂົາເຈົ້າມີລາຍໄດ້ສະເລ່ຍຢູ່ທີ່ 9,283.95 ບາດ/ເດືອນ ຫຼື ປະມານ 5,570,000 ກີບ/ເດືອນ.

ຜ່ານການການສຶກສາຄົ້ນຄວ້າສາມາດຕີລາຄາໄດ້ວ່າ ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທເປັນກົນລະຍຸດໃນການປັບຕົວເພື່ອຄວາມຢູ່ລອດຂອງໄວໜຸ່ມໃນເຂດຊົນນະບົດ ເຊິ່ງເກີດຈາກແຮງຜັກດັນທາງດ້ານເສດຖະກິດ, ການຂາດເຂີນປັດໄຈສະໜັບສະໜູນໃຫ້ແກ່ການດໍາລົງຊີວິດ ແລະ ປັດໄຈດ້ານລັກສະນະສະເພາະຂອງແຕ່ລະຄົວເຮືອນ ເຊິ່ງຜົນການວິໄຈພົບວ່າ ປັດໄຈທາງດ້ານເສດຖະກິດມີອິດທິພົນຫຼາຍຕໍ່ການເຄື່ອນຍ້າຍແຮງງານອອກຈາກພື້ນທີ່ ໂດຍສະເພາະແມ່ນປັດໄຈດ້ານປະສິດທິພາບການຜະລິດ (Fef) ເຊິ່ງມີການພົວພັນໃນທິດທາງກົງກັນຂ້າມກັບການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທຂອງສະມາຊິກໃນຄົວເຮືອນ ໂດຍຄົວເຮືອນທີ່ມີພື້ນທີ່ການຜະລິດກະສິກໍາບໍ່ອຸດົມສົມບູນ ຫຼື ມີປະສິດທິພາບການຜະລິດຕໍ່າ ມີໂອກາດທີ່ຈະມີສະມາຊິກໃນຄົວເຮືອນເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໄທເຖິງ 86.87% ອາດຈະເນື່ອງມາຈາກຄົວເຮືອນທີ່ມີພື້ນທີ່ການຜະລິດບໍ່ມີຄວາມອຸດົມສົມບູນຈະໄດ້ຮັບຜົນຜະລິດໜ້ອຍ, ບໍ່ຄຸ້ມຄ່າກັບການລົງທຶນ ດັ່ງນັ້ນ, ເຂົາເຈົ້າຈຶ່ງບໍ່ຢາກເພິ່ງພາການຜະລິດກະສິກໍາເປັນແຕ່ຢ່າງດຽວ, ເນື້ອທີ່ການຜະລິດກະສິກໍາຂອງຄົວເຮືອນ (are) ) ແມ່ນມີການພົວພັນໃນທິດທາງກົງກັນຂ້າມກັບການເຄື່ອນຍ້າຍແຮງງານ ໝາຍຄວາມວ່າຄົວເຮືອນທີ່ມີເນື້ອທີ່ການຜະລິດກະສິກໍາຫຼຸດລົງມີໂອກາດທີ່ຈະມີສະມາຊິກໃນຄົວເຮືອນເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໄທເພີ່ມຂຶ້ນ ເນື່ອງມາຈາກຄົວເຮືອນທີ່ມີພື້ນທີ່ການຜະລິດກະສິກໍາໜ້ອຍ ຈະໄດ້ຮັບຜົນຜະລິດກະສິກໍາຈະບໍ່

ກຸ້ມກິນ ແລະ ບໍ່ສາມາດຂາຍເປັນລາຍຮັບໃຫ້ກັບຄອບຄົວໄດ້ ດັ່ງນັ້ນ, ຈຶ່ງເຮັດໃຫ້ເຂົາຕັດສິນໃຈໄປຊອກຫາໂອກາດ ຫຼື ຊ່ອງທາງໃນການປະກອບອາຊີບອື່ນທີ່ມີລາຍຮັບສູງ ແລະ ມີຄວາມໝັ້ນຄົງກວ່າການເຮັດວຽກໃນຂະແໜງຜະລິດກະສິກຳ ຈຶ່ງເຮັດໃຫ້ເຂົາເຈົ້າມີການເຄື່ອນຍ້າຍແຮງງານໄປຊອກຫາວຽກເຮັດຢູ່ທ້ອງຖິ່ນອື່ນຫຼາຍຂຶ້ນ ເຊິ່ງສອດຄ່ອງກັບງານວິໄຈຂອງ Yormirzoev ທີ່ສຶກສາກ່ຽວກັບປັດໄຈທີ່ເປັນຕົວກຳນົດການເຄື່ອນຍ້າຍແຮງງານຈາກປະເທດທາຈິກິສສະຖານເຂົ້າສູ່ປະເທດລັດເຊຍ ໃນປີ 2017 ທີ່ພົບວ່າ ການມີເນື້ອທີ່ດິນຈຳກັດ ແລະ ເສດຖະກິດທີ່ຂາດເຂີນມີຜົນຕໍ່ການເຄື່ອນຍ້າຍຂອງແຮງງານທາຈິກິສສະຖານເຂົ້າສູ່ປະເທດລັດເຊຍ, ສອດຄ່ອງກັບງານວິໄຈຂອງ Hanif, Islam and Ahmed ທີ່ໄດ້ສຶກສາກ່ຽວກັບ ປັດໄຈທີ່ມີຜົນຕໍ່ການເຄື່ອງຍ້າຍແຮງງານໃນພາກກະສິກຳຈາກຊົນນະບົດສູ່ຕົວເມືອງແມ່ນເກີດຈາກຂາດແຄນທີ່ດິນ

ຕາຕະລາງ 4.3 ຜົນການວິເຄາະປັດໄຈທີ່ມີຜົນຕໍ່ການຕັດສິນໃຈເຄື່ອນຍ້າຍໄປເຮັດວຽກຢູ່ລາຊະອານາຈັກໄທຂອງປະຊາຊົນ ເມືອງ ໂພນທອງ ແຂວງ ຈຳປາສັກ ໂດຍໃຊ້ແບບຈຳລອງ Logit Model

| ຕົວປ່ຽນອິດສະຫຼະ | | Maximum Likelihood | | | Marginal effect | | |
|---|---|---|---|---|---|---|---|
| | | Coefficient | z | P>\|z\| | dy/dx | Z | P>\|z\| |
| gender | ເພດຂອງຫົວໜ້າຄົວເຮືອນ | 0.7101077 | 1.97 | 0.049 | 0.1214157** | 1.97 | 0.049 |
| age | ອາຍຸຂອງຫົວໜ້າຄົວເຮືອນ | -0.0091533 | -0.55 | 0.580 | -0.001573 | -0.55 | 0.580 |
| edu | ລະດັບການສຶກສາສູງສຸດ | 0.2700724 | 0.45 | 0.654 | 0.0491108 | 0.43 | 0.671 |
| mem | ຈຳນວນສະມາຊິກໃນຄົວເຮືອນ | 0.4420092 | 1.17 | 0.243 | 0.0723016 | 1.22 | 0.222 |
| lab | ກຳລັງແຮງງານທັງໝົດໃນຄົວເຮືອນ | 0.4240633 | 2.40 | 0.017 | 0.0728981** | 2.40 | 0.016 |
| stud | ຈຳນວນສະມາຊິກທີ່ກຳລັງຮຽນໃນປະຈຸບັນ | -0.1030335 | -0.52 | 0.605 | -0.017712 | -0.52 | 0.604 |
| occu | ອາຊີບຫຼັກຂອງຄົວເຮືອນ | 0.0046078 | 0.04 | 0.970 | 0.0007921 | 0.04 | 0.970 |
| area | ເນື້ອທີ່ການຜະລິດກະສິກຳ | -0.2039688 | -1.82 | 0.068 | -0.035063* | -1.83 | 0.068 |
| fef | ປະສິດທິພາບການຜະລິດ | -5.053668 | -7.35 | 0.000 | -0.868745*** | -7.87 | 0.000 |
| floo | ພື້ນທີ່ກະສິກຳທີ່ໄດ້ຮັບຜົນກະທົບ | 0.5547868 | 1.53 | 0.126 | 0.0996515 | 1.47 | 0.142 |
| trac | ການມີລົດໄຖໃນຄົວເຮືອນ | -0.0718163 | -0.15 | 0.881 | -0.0121846 | -0.15 | 0.879 |
| fru | ການມີລົດປັ່ນເຂົ້າໃນຄົວເຮືອນ | -0.0632786 | -0.14 | 0.886 | -0.0109968 | -0.14 | 0.887 |
| catl | ຈຳນວນງົວ, ຄວາຍໃນຄົວເຮືອນ | -0.0545909 | -1.48 | 0.138 | -0.0093844 | -1.49 | 0.137 |
| deb | ການມີພະລາໜີ້ສິນຂອງຄົວເຮືອນ | 1.485643 | 3.95 | 0.000 | 0.2289026*** | 4.28 | 0.000 |
| irri | ການມີລະບົບຊົນລະປະທານເຂົ້າເຖິງ | -0.9045376 | -2.22 | 0.026 | -0.142846** | -2.44 | 0.015 |
| oln | ກຳມະສິດໃນການເປັນເຈົ້າຂອງທີ່ດິນ | -0.5300084 | -1.16 | 0.244 | -0.0828147 | -1.29 | 0.197 |
| km | ໄລຍະທາງຈາກບ້ານຫາດ່ານຊາຍແດນ | -0.0402131 | -0.62 | 0.533 | -0.0069128 | -0.63 | 0.531 |
| raod | ການມີເສັ້ນທາງເຂົ້າເຖິງທັງສອງລະດູ | 0.6766905 | 1.79 | 0.074 | 0.1253985* | 1.69 | 0.092 |
| wate | ການມີນ້ຳປະປາເຂົ້າເຖິງ | 0.0537722 | 0.12 | 0.905 | 0.0091766 | 0.12 | 0.905 |
| work | ຄວາມສາມາດໃນການຫາວຽກໃນທ້ອງຖິ່ນ | -0.9315964 | -2.54 | 0.011 | -0.1759075** | -2.36 | 0.018 |
| Cons | ຄ່າຄົງທີ່ | 18.64999 | 5.64 | 0.000 | | | |
| | Number of obs | = | 336 | | | | |
| | LR chi2(12) | = | 203.45 | | | | |
| | Prob > chi2 | = | 0.0000 | | | | |
| | Pseudo R2 | = | 0.4684 | | | | |
| | | | Maxginal effect after logit<br>y = Pr(th) (predict)<br>= 0 .77945709 | | | | |

ໝາຍເຫດ: *,***,*** ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 90%, 95% ແລະ 99% ຕາມລຳດັບ.

ໃນການເຮັດການຜະລິດກະສິກຳ ແລະ ຄວາມທຸກຍາກ ແລະ ຍັງສອດຄ່ອງກັບງານວິໄຈຂອງທ່ານ Humera and Ambreen ທີ່ໄດ້ເຮັດການສຶກສາໃນປີ 2017 ກ່ຽວກັບ ປັດໄຈທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານເພດຍິງໃນປະເທດບັງກາລະເດສທີ່ພົບວ່າ ປັດໄຈດ້ານເສດຖະກິດເປັນຕົວຊຸກຍູ້ໃຫ້ແຮງງານເພດຍິງມີການອົບພະຍົບອອກນອກປະເທດຫຼາຍຂຶ້ນ. ພ້ອມທັງສອດຄ່ອງກັບງານວິໄຈຂອງ ສີທາ ເຂັມມະລາດ ທີ່ ໄດ້ຄົ້ນຄວ້າກ່ຽວກັບຜົນກະທົບຂອງ COVID-19 ຕໍ່ການເຄື່ອນຍ້າຍແຮງງານລາວ, ກໍລະນີສຶກສາ ແຮງງານແຂວງສະຫວັນນະເຂດ ເຄື່ອນຍ້າຍມາຈາກລາຊະອານາຈັກໄທໃນປີ 2021 ແລະ IOM ໃນປີ 2021. ນອກຈາກປັດໄຈທາງດ້ານເສດຖະກິດແກ້ວຍັງເກີດຈາກການຂາດແຄນປັດໄຈທີ່ມາສະໜັບສະໜູນໃຫ້ແກ່ການດຳລົງຊີວິດ ໂດຍສະເພາະແມ່ນປັດໄຈດ້ານການມີລະບົບຊົນລະປະທານເຂົ້າເຖິງພື້ນທີ່ການຜະລິດ (irri) ແລະ ບໍ່ສາມາດຊອກຫາວຽກເຮັດງານທຳໃນທ້ອງຖິ່ນ (Work) ເຊິ່ງຜົນການວິໄຈພົບວ່າ ການມີລະບົບຊົນລະປະທານເຂົ້າເຖິງ) irri) ແມ່ນມີການພົວພັນໃນທິດທາງກົງກັນຂ້າມກັບການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທເຊັ່ນດຽວກັນ ໂດຍຄົວເຮືອນທີ່ບໍ່ມີລະບົບຊົນລະປະທານເຂົ້າເຖິງພື້ນທີ່ການຜະລິດກະສິກຳ ມີໂອກາດທີ່ສະມາຊິກໃນຄົວເຮືອນຈະເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທສູງກວ່າຄົວເຮືອນທີ່ມີລະບົບຊົນລະປະທານເຂົ້າເຖິງ 14.28 % ເນື່ອງມາຈາກຄົວເຮືອນທີ່ບໍ່ມີລະບົບຊົນລະປະທານເຂົ້າເຖິງ ຈະເຮັດການຜະລິດກະສິກຳໄດ້ພຽງແຕ່ລະດູດຽວ ເຮັດໃຫ້ເຂົາເຈົ້າບໍ່ມີວຽກເຮັດທີ່ຕໍ່ເນື່ອງ ໂດຍສະເພາະໃນຊ່ວງລະດູແລ້ງ ແລະ ຍັງມີຂໍ້ຈຳກັດໃນການນຳໃຊ້ພື້ນທີ່ການຜະລິດເຂົ້າໃນການເຮັດກິດຈະກຳອື່ນ ເນື່ອງຈາກບໍ່ມີນ້ຳພຽງພໍໃນລະດູແລ້ງ. ສ່ວນດ້ານການຊອກຫາວຽກໃນທ້ອງຖິ່ນ (work) ແມ່ນພົບວ່າ ມີການພົວພັນໃນທິດທາງກົງກັນຂ້າມກັບການເຄື່ອນຍ້ານແຮງງານໄປເຮັດວຽກຢູ່ປະເທດໄທຂອງສະມາຊິກໃນຄົວເຮືອນ ໝາຍຄວາມວ່າ ຄົວເຮືອນທີ່ບໍ່ສາມາດຊອກຫາວຽກເຮັດງານທຳໄດ້ໃນທ້ອງຖິ່ນມີໂອກາດທີ່ສະມາຊິກໃນຄົວເຮືອນຈະເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທຫຼາຍກວ່າຄົວເຮືອນທີ່ສາມາດຊອກຫາວຽກເຮັດໃນທ້ອງຖິ່ນໄດ້ ເນື່ອງມາຈາກພື້ນທີ່ການສຶກສາເປັນເຂດຊົນນະບົດ, ຍັງບໍ່ທັນມີໂຮງຈັກໂຮງງານ ຫຼື ຫົວໜ່ວຍທຸລະກິດທີ່ຈະຈ້າງແຮງງານເປັນຈຳນວນຫຼາຍ ເຮັດໃຫ້ຄົນໃນທ້ອງຖິ່ນສ່ວນໃຫຍ່ບໍ່ສາມາດຊອກຫາວຽກເຮັດງານທຳໄດ້ ດັ່ງນັ້ນ, ຈຶ່ງຕ້ອງມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ທ້ອງຖິ່ນອ◌ື່ນເປັນສ່ວນໃຫຍ່ ຜົນການຄົ້ນຄວ້າວິໄຈນີ້ສອດຄ່ອງກັບງານວິໄຈຂອງ ສີລິລັດ ສຸກັນທາ ໃນປີ 2014 ທີ່ໄດ້ເຮັດການຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍແຮງງານຂ້າມຊາດສັນຊາດພະມ້າ ໃນເຂດພາກເໜືອຕອນບົນຂອງປະເທດໄທ ທີ່ພົບວ່າ ປັດໄຈທີ່ມີສ່ວນຜັກດັນໃຫ້ແຮງງານພະມ້າເດີນທາງເຂົ້າໄປເຮັດວຽກໃນຕອນເໜືອຂອງປະເທດໄທແມ່ນມາຈາກ ຄວາມຕ້ອງການມີວຽກເຮັດງານທຳ ແລະ ການມີລາຍໄດ້ທີ່ໝັ້ນຄົງ ແລະ ການມີທາງເລືອກໃນການຊອກຫາວຽກເຮັດງານທຳທີ່ຫຼາກຫຼາຍ , ສອດຄ່ອງກັບງານວິໄຈຂອງ ສີທາ ເຂັມມະລາດ ໃນປີ 2021. ສ່ວນປັດໄຈທີ່ເປັນລັກສະນະສະເພາະຂອງຄົວເຮືອນທີ່ມີຜົນຕໍ່ການເຄື່ອນຍ້າຍແຮງງານໄດ້ແກ່: ປັດໄຈດ້ານເພດຂອງຫົວໜ້າຄົວເຮືອນ ແລະ ກຳລັງແຮງງານທັງໝົດຂອງຄົວເຮືອນ ເຊິ່ງສອດຄ່ອງກັບຜົນການວິໄຈຂອງ Thanakorn Chathipa and Thanapauge Chamaratana, 2020 ທີ່ໄດ້ສຶກສາເຖິງປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈຍ້າຍຖິ່ນຂ້າມປະເທດຂອງແຮງງານມຽນມ້າ ໃນຈັງຫວັດຂອນແກ່ນ ປະເທດໄທ ທີ່ພົບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈຍ້າຍຖິ່ນຂ້າມປະເທດຂອງແຮງງານມຽນມ້າໄດ້ແກ່ເພດຂອ :ງແຮງງານທີ່ເປັນເພດຊາຍ30-20 ອາຍຸຂອງແຮງງານທີ່ຢູ່ໃນຊ່ວງ , ປີ ແລະ ລະດັບການສຶກສາທີ່ຕ່ຳກວ່າຊັ້ນປະຖົມສຶກສາ ແລະ ຊັ້ນປະຖົມສຶກສາ. ສຳລັບຜົນການວິໄຈທີ◌່ບໍ່ເປັນໄປຕາມສົມມຸດຖານທີ່ວາງໄວ້ແມ່ນປັດໄຈດ້ານ

ການມີເສັ້ນທາງທີ່ສະດວກສະບາຍເຂົ້າເຖິງຄົວເຮືອນ ເຊິ່ງຜູ້ວິໄຈຄາດວ່າການມີເສັ້ນທາງທີ່ສະດວກສະບາຍເຂົ້າເຖິງຄົວເຮືອນຈະເຮັດໃຫ້ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທຫຼຸດລົງ ແຕ່ຜົນການວິໄຈພົບວ່າ ການມີເສັ້ນທາງທີ່ສະດວກສະບາຍເຂົ້າເຖິງຄົວເຮືອນເຮັດໃຫ້ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທເພີ່ມຂຶ້ນ ເຊິ່ງສາເຫດດັ່ງກ່າວອາດຈະເນື່ອງມາຈາກການມີເສັ້ນທາງເຂົ້າເຖິງໄດ້ກະຕຸ້ນໃຫ້ມີຄວາມຕ້ອງການຢາກໄດ້ສິ່ງອໍານວຍຄວາມສະດວກສະບາຍມາຮັບໃຊ້ໃນການດໍາລົງຊີວິດຫຼາຍຂຶ້ນ ເຊັ່ນ: ລົດຈັກ, ລົດໃຫຍ່, ປັດໄຈການຜະລິດກະສິກໍາ, ເງິນທຶນ ແລະ ອື່ນໆ ເພື່ອມາສະໜັບສະໜູນໃຫ້ທ່າແຮງທີ່ຕົນເອງມີສາມາດນໍາມາສ້າງລາຍຮັບເພີ່ມໃຫ້ກັບຄອບຄົວຫຼາຍຂຶ້ນ ດັ່ງນັ້ນ, ຈິ່ງເຮັດໃຫ້ມີການເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໄທເພີ່ມຂຶ້ນ.

## 4. ວິພາກຜົນ

ຢ່າງໃດກໍ່ຕາມການໄປເຮັດວຽກຢູ່ປະເທດໄທຂອງແຮງງານລາວແມ່ນສາມາດຕີລາຄາໄດ້ວ່າ ມັນຊ່ວຍສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ກັບຄົວເຮືອນທີ່ມີສະມາຊິກໃນຄົວເຮືອນໄປໄທໄດ້ຫຼາຍ ຜ່ານການວິເຄາະກ່ຽວກັບຜົນກະທົບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທຕໍ່ກັບເສດຖະກິດຂອງຄົວເຮືອນ ທີ່ພິຈາລະນາໃນແງ່ຂອງລາຍໄດ້, ລາຍຈ່າຍ ແລະ ຊັບສິນຂອງຄົວເຮືອນສາມາດສະຫຼຸບໄດ້ວ່າ ຄົວເຮືອນທີ່ມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ປະເທດໄທມີລາຍໄດ້, ລາຍຈ່າຍ ແລະ ຊັບສິນຄົວເຮືອນສູງກວ່າຄົວເຮືອນທີ່ບໍ່ມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ປະເທດໄທເຖິງ 23.78 % ,  20.77 % ແລະ 21.26 % ຕາມລໍາດັບ ເນື່ອງຈາກການເຮັດວຽກຢູ່ປະເທດໄທມີລາຍໄດ້ທີ່ຂ້ອນຂ້າງສູງ ແລະ ເປັນປົກກະຕິທຸກໆເດືອນເມື່ອທຽບກັບການເຮັດວຽກໃນທ້ອງຖິ່ນ ເຊິ່ງຈໍານວນເງິນທີ່ຝາກກັບມາບ້ານດັ່ງກ່າວເຮັດໃຫ້ຄອບຄົວທາງບ້ານມີລາຍໄດ້ເພີ່ມຂຶ້ນ, ສາມາດເຂົ້າເຖິງການບໍລິໂພກໄດ້ຫຼາຍກວ່າເກົ່າ ແລະ ຍັງເປັນເງິນທຶນທີ່ນໍາມາລົງທຶນ ຫຼື ຊື້ປັດໄຈການຜະລິດຕ່າງໆທີ່ຈໍາເປັນໃນຄົວເຮືອນ ເຊິ່ງເຮັດໃຫ້ຄົວເຮືອນມີລາຍໄດ້ເພີ່ມຂຶ້ນ. ນອກຈາກນີ້ຍັງມີການຊື້ຊັບສິນ ຫຼື ວັດຖຸສິ່ງຂອງຕ່າງໆເກັບໄວ້ເພື່ອເປັນຊັບສິນເວລາກັບຄືນມາຢູ່ບ້ານ.

## 5. ສະຫຼຸບຜົນ

ສະຫຼຸບແລ້ວປັດໄຈທີ່ສົ່ງຜົນໃຫ້ມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ລາຊະອານາຈັກໄທແມ່ນມາຈາກແຮງຜັກດັນທາງດ້ານເສດຖະກິດ, ການຂາດສະໜັບສະໜູນໃຫ້ແກ່ການດໍາລົງຊີວິດ ແລະ ປັດໄຈທີ່ເປັນລັກສະນະສະເພາະຂອງຄົວເຮືອນ ແຕ່ເຖິງຢ່າງໃດກໍ່ຕາມການມີສະມາຊິກໃນຄົວເຮືອນໄປເຮັດວຽກຢູ່ປະເທດໄທໄດ້ພິສູດໃຫ້ເຫັນວ່າມັນສາມາດເຮັດໃຫ້ຖານະທາງເສດຖະກິດຂອງຄົວເຮືອນດີຂຶ້ນ ໂດຍສະເພາະໃນແງ່ຂອງລາຍໄດ້, ລາຍຈ່າຍ ແລະ ດ້ານຊັບສິນ ແຕ່ວ່າຄຽງຄູ່ກັບຂໍ້ດີດັ່ງກ່າວກໍ່ຍັງມີຂໍ້ເສຍຈໍານວນໜຶ່ງທີ່ຕາມມາ ໂດຍສະເພາະແມ່ນການຂາດແຄນແຮງງານໄວໜຸ່ມຈໍານວນຫຼາຍທີ່ຈະມາຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດສັງຄົມໃນທ້ອງຖິ່ນ ໂດຍສະເພາະແມ່ນຂະແໜງກະສິກໍາ ເຊິ່ງມັນເຮັດໃຫ້ຕົ້ນທຶນທາງດ້ານຄ່າຈ້າງແຮງງານໃນທ້ອງຖິ່ນເພີ່ມຂຶ້ນ, ການມີພຶດຕິກໍາທີ່ບໍ່ເໝາະສົມຂອງແຮງງານກໍລະນີມີການກັບມາບ້ານ, ຄວາມສ່ຽງທີ່ຈະຖືກເອົາປຽບໃນການອອກແຮງງານຢູ່ປະເທດເພື່ອນບ້ານ ແລະ ຄວາມຫຍຸ້ງຍາກໃນການຄຸ້ມຄອງຕິດຕາມຂອງໜ່ວຍງານທີ່ກ່ຽວຂ້ອງເປັນຕົ້ນ.

## 6. ຄວາມຮູ້ບຸນຄຸນ

ຂ້າພະເຈົ້າ ມີຄວາມພູມໃຈເປັນຢ່າງຍິ່ງທີ່ໄດ້ສໍາເລັດການຂຽນບົດວິທະຍານິພົນໃນຄັ້ງນີ້ ເຊິ່ງກ່ອນທີ່ທຸກຢ່າງຈະປະສົບຜົນສໍາເລັດລົງໄດ້ດ້ວຍດີແມ່ນຍ້ອນການໃຫ້ຄວາມຮ່ວມມືຈາກບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ໃນການຕອບສະໜອງດ້ານຂໍ້ມູນຂ່າວສານ ແລະ ໃຫ້ການຊີ້ນໍາເປັນຢ່າງດີ ໂດຍສະເພາະແມ່ນຄະນະເສດຖະສາດ ແລະ ການຄຸ້ມ

ຄອງທີ່ໄດ້ໃຫ້ໂອກາດແກ່ຂ້າພະເຈົ້າໃນການສຶກສາ ຮໍ່າຮຽນ ແລະ ທຸກພາກສ່ວນທີ່ໄດ້ອຳນວຍຄວາມ ສະດວກສະບາຍ ແລະ ໃຫ້ການສະໜັບສະໜູນ.

ພິເສດ, ຂໍສະແດງຄວາມຂອບໃຈຢ່າງຍິ່ງມາ ຍັງທ່ານ ປອ ນາງ ບຸນຖົມ ສີສຸມັງ ທີ່ເປັນອາຈານທີ່ ປຶກສາ ແລະ ໃຫ້ການຊີ້ນຳນຳພາໃນການຂຽນບົດວິ ທະຍານິພົນໃນຄັ້ງນີ້ ແລະ ທີ່ລືມບໍ່ໄດ້ກໍ່ ຄືອາຈານ ທຸກທ່ານທີ່ສິດສອນ ແລະ ຖ່າຍທອດຄວາມຮູ້, ຄວາມສາມາດແກ່ຂ້າພະເຈົ້າ. ພ້ອມກັນນີ້ຂໍສະແດງ ຄວາມຮູ້ບຸນຄຸນມາຍັງຄະນະກຳມະການທຸກທ່ານທີ່ ໄດ້ສະຫຼະເວລາ, ເຫື່ອແຮງ ແລະ ສະຕິປັນຍາຂອງ ທ່ານໃນການໃຫ້ຄຳແນະນຳ ແລະ ປະກອບຄຳຄິດ ຄຳເຫັນເຮັດໃຫ້ບົດຂອງຂ້າພະເຈົ້າມີຄວາມຄົບຖ້ວນ ສົມບູນ. ນອກຈາກນີ້ ຂ້າພະເຈົ້າຂໍສະແດງຄວາມ ຂອບໃຈມາຍັງພະແນກແຮງງານ ແລະ ສະຫວັດດີ ການສັງຄົມ ແຂວງ ຈຳປາສັກ, ອຳນາດການປົກຄອງ ບ້ານ ລວມເຖິງພໍ່ແມ່ປະຊາຊົນທຸກທ່ານ ທີ່ສະເສຍ ລະຫຼະເວລາ ອັນມີຄຸນຄ່າຂອງທ່ານ ໃນການສະໜ ອງຂໍ້ມູນຂ່າວສານທີ່ເປັນປະໂຫຍດໃຫ້ແກ່ການຂຽນ ວິທະຍານິພົນໃນຄັ້ງນີ້.

## 7. ເອກະສານອ້າງອີງ

ສິລິລັດ ສຸກັນທາ.(2014). ການເຄື່ອນຍ້າຍແຮງງານ ຂ້າມຊາດສັນຊາດພະມ້າ ໃນເຂດພາກເໜືອ ຕອນບົນຂອງປະເທດໄທ. Journal of Economics Chianmai University.

ສິທາ ເຂັມມະລາດ.(2021). ຜົນກະທົບຂອງ COVID-19 ຕໍ່ການເຄື່ອນຍ້າຍແຮງງານ ລາວ, ກໍລະນີສຶກສາ ແຮງງານແຂວງ ສະ ຫວັນນະເຂດ ເຄື່ອນຍ້າຍມາຈາກລາຊະອາ ນາຈັກໄທ. ມະຫາວິທະຍາໄລ ສຸພານຸວົງ. Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 309 – 319.

ພະແນກແຮງງານ ແລະ ສະຫັວດດີການສັງຄົມ ແຂ ວງ ຈຳປາສັກ .(2020). ສະຖິຕິແຮງງານໄປ ອອກແຮງງານຢູ່ຕ່າງປະເທດ.

International Organization for Migration (IOM), 2021. An Analysis of Migration Trends of Lao Migrants for Lao People's Democratic Republic in Two Selected Provinces: Savannakhet and Xayaboury. IOM. Vientiane.

Jampaklay, A; Kittisuksathi, S. (2015). Migrant workers' remittances : Cambodia, Lao PDR and Myanmar / Aree Jampaklay, Sirinan Kittisuksathi ; ILO/Japan Project on Managing Cross-border Movement of Labour in Southeast Asia ; ILO Regional Office for Asia and the Pacific. - Bangkok: ILO, 2009 xviii, 82 p.

Lan Anh Hoang, (2011). Impact of Internal and International Labour Migration: South-East Asia. Migrating out of poverty, Research programe consortium.

Manivong, V. Cramb, R and Newby, J.(2012): The Impact of Labour Migration on Rice Intensification in Southern Laos. Research in agricultural & applied economics.

Thanakorn. C and Thanapauge C. .(2020) nfluenced Factors of Transnational Migration Decision of Myanmar Laborers in Khon Kaen. Journal of Man and Society Faculty of

Humanities and Social Sciences, Khon Kaen University

UNDESA. (2020). "International Migrant Stock 2020". United Nations Department of Economic and Social Affairs.

World Bank. (2018). Migration and Rremitances: Special Topic: Transit Migration, January 2018. Washington, DC: World Bank.

Yormirzoev, M. (2017). Determinants of Labor Migration Flows to Russia: Evidence from Tajikistan. Economics and Sociology, 10(3), 72-80. doi:10.14254/20 71-789X.2017/10-3/5